## ໂຄງການຊົນລະປະທານ ແລະ ການຜະລິດສິນເປັນຄ້າກະສິກຳຂະໜາດນ້ອຍ (PICSA)

# ບົດແນະນຳວຽກງານການຟື້ນຟູເສັ້ນທາງ

## I. ຄວາມໝາຍລວມຂອງໂຄງການ

15. ລັດຖະບານແຫ່ງ ສປປ ລາວ ແລະ IFAD ລົງທຶນໃນໂຄງການທີ່ເລັ່ງໃສ່ການຜະລິດກະສິກຳ ແລະ ການຄ້າກະສິກຳຂະໜາດນ້ອຍ. ໂຄງການນີ້ມີຊື່ວ່າ Partnerships for Irrigation and Commercialization of Smallholder Agriculture (PICSA). PICSA ໃຫ້ການສະໜັບສະໜູນການຄຸ້ມຄອງຊົນລະປະທານ ແລະ ການເຊື່ອມໂຍງຕະຫຼາດໃຫ້ກັບລະບົບຊົນລະປະທານທີ່ຟື້ນຟູພາຍໃຕ້ໂຄງການໂຄງລ່າງພື້ນຖານຊົນນະບົດ ແລະ ການຄຸ້ມຄອງແຫຼ່ງນໍ້າແບບຍືນຍົງ (SRIWMSP, ADB/EU-funded); ເຊັ່ນດຽວກັນກັບເຂດຊົນລະປະທານອື່ນໆ ແລະສະພາບແວດລ້ອມຂອງເຂົາເຈົ້າ. ທັງ SRIWMSP ແລະ PICSA ໄດ້ຮັບຜົນປະໂຫຍດຈາກມາດຕະການອະນຸລັກໃນເຂດອ່າງໂຕ່ງເທິງທີ່ສະໜັບສະໜູນໂດຍຜ່ານໂຄງການຫຼຸດຜ່ອນການປ່ອຍອາຍພິດຂອງ ສປປ ລາວ ໂດຍຜ່ານການປັບປຸງການປົກຄອງ ແລະ ໂຄງການຄຸ້ມຄອງພູມສັນຖານປ່າໄມ້ແບບຍືນຍົງ (ERP; BMZ/GCF-funded, ປະຕິບັດໂດຍ GIZ). ໂຄງການລວມແມ່ນແນໃສ່ເພີ່ມລາຍຮັບກະສິກຳຈາກການປູກພືດທີ່ມີມູນຄ່າສູງ, ການສະໜອງຜະລິດຕະພັນ ແລະ ແນວພັນ, ການອະນຸລັກແຫຼ່ງນໍ້າ ແລະ ໂພຊະນາການຢູ່ 4 ແຂວງພາກເໜືອຄື: ຫົວພັນ, ຊຽງຂວາງ, ຫຼວງພະບາງ ແລະ ໄຊຍະບູລີ.

16. ເຫດຜົນ. ເຫດຜົນທັນທີທັນໃດຂອງ PICSA ແມ່ນວ່າຜົນກຳໄລທີ່ສູງຂຶ້ນຈາກລະບົບຊົນລະປະທານເຮັດໃຫ້ກຸ່ມຜູ້ໃຊ້ນໍ້າສາມາດສະໜອງທຶນໃນການດຳເນີນງານ, ການບຳລຸງຮັກສາແລະການດັດແປງລະບົບເລັກນ້ອຍ - ແລະດັ່ງນັ້ນຈຶ່ງຍືນຍົງລະບົບຂອງພວກເຂົາ. ເຫດຜົນອັນກວ້າງໃຫຍ່ກວ່ານັ້ນ ແມ່ນວ່າ ການຜະລິດກະສິກຳຂະໜາດນ້ອຍທາງດ້ານການຄ້າທີ່ເຂັ້ມຂຸ້ນຂຶ້ນໃນລະບົບການກະເສດທີ່ສຸມໃສ່ເຂດດິນທາມຊົນລະປະທານແມ່ນເປັນຕົວຂັບເຄື່ອນທີ່ເຂັ້ມແຂງໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມຂອງທ້ອງຖິ່ນ, ການປັບປຸງການບໍລິໂພກໂພຊະນາການ ແລະ ການນຳໃຊ້ຊັບພະຍາກອນທຳມະຊາດແບບຍືນຍົງ.

## II. ການຟື້ນຟູເສັ້ນທາງ

ການຟື້ນຟູເສັ້ນທາງເປັນໂຄງການຍ່ອຍທີ່ສຳຄັນ ທີ່ນອນຢູ່ໃນໂຄງການ ຊກຂ ໂດຍມີເປົ້າໝາຍໃນການປັບປຸງເສັ້ນທາງທີ່ມີຢູ່ແລ້ວ ມີຄວາມຍາວລວມ 502 ກມ ເຊິ່ງໄດ້ການຈັດແບ່ງໃຫ້ແຕ່ລະເມືອງລະ 26 ກມ ເພື່ອຟື້ນຟູເສັ້ນທາງເຂົ້າພື້ນທີ່ກະສິກຳ ແລະ ກຸ່ມບ້ານເປົ້າໝາຍທີ່ນອນຢູ່ໃນຂອບເຂດໂຄງການ ໃນ 19 ເມືອງ ຂອງ 4 ແຂວງພາກ ເໜືອຄື: ຫົວພັນ, ຊຽງຂວາງ, ຫຼວງພະບາງ ແລະ ໄຊຍະບູລີ ເຊິ່ງໄດ້ມີການຈັດສັນງົບປະມານເບື້ອງຕົ້ນ 5,000 ໂດລາ/ກມ ເພື່ອນຳໃຊ້ງົບປະມານດັ່ງກ່າວນີ້ ທາງໂຄງການໄດ້ມີການຄັດເລືອກເອົາເສັ້ນທາງເງື່ອນໄຂສອດຄອງກັບຂໍ້ກຳນົດນິດຂອງໂຄງການເທົ່ານັ້ນ ຈຶ່ງຈະໄດ້ຮັບບູລະມະສິດໃນການປັບປຸງເສັ້ນທາງທີ່ມີສະພາບເຊື່ອມໂຊມໃຫ້ມີຄວາມສາມາດໃຊ້ງານໄດ້ສອງລະດູ, ເຊິ່ງການຄັດເລືອກເສັ້ນທາງແມ່ນເປັນໄປຕາມຮູບແບບຟອມ 1 ຈະເປັນຕົວຊີ້ວັດເບື້ອງຕົ້ນ ແລະ ແບບຟອມ 2 ຈະເປັນ ຕົວຊີ້ວັດໃນການຕັດສິນໃຈໃນການກໍ່ສ້າງສ້ອມແປງທີ່ມີລາຍລະອຽດຂອງແຕ່ລະໜ້າວຽກ.

## III. ການກະກຽມເອກະສານຂອງໂຄງການຟື້ນຟູເສັ້ນທາງ ຂອງ (PICSA)

ເນື່ອງຈາກໂຄງການປັບປຸງເສັ້ນທາງ ພາຍໃຕ້ໂຄງການ (PICSA) ເຫັນວ່າເອກະສານ ການຈັດຕັ້ງປະຕິບັດວຽກຍັງບໍ່ທັນພຽງພໍ ແລະ ເປັນໄປຕາມຮູບແບບອັນດຽວກັນທັງ 4 ແຂວງ. ສະນັ້ນ, ເພື່ອໃຫ້ເປັນບັນທັດຖານອັນດຽວກັນ ໃນບັນດາບາດກ້າວຂອງທຸກວຽກງານ, ໃຫ້ແທດເໝາະກັບນະໂຍບາຍຂອງໂຄງການ (PIM) ແລະ ເພື່ອນຳໃຊ້ເຕັກນິກໃຫ້ມີຄວາມເໝາະສົມກັບສະພາບຕົວຈິງ ຂອງການກໍ່ສ້າງທາງຊ່ອຍຊົນນະບົດລະດັບ 5 ໃຫ້ມີປະສິດທິພາບຫລາຍຂື້ນ ຈຶ່ງຈຳເປັນຕ້ອງກະກຽມເອກະສານດັ່ງຕໍ່ນີ້:

1. ເອກະສານປະເມີນເງື່ອນໄຂຂອງໂຄງການ (ວັດແທກຄວາມເພິ່ງພໍໃຈຕາມ PIM)
2. ເອກະປະເມີນໜ້າວຽກລະອຽດ, ຈັດລຽງລຳດັບງານ (ເພື່ອເປັນຕົວຊີ້ວັດທາງດ້ານງົບປະມານ ແລະ ຜົນໄດ້ຮັບ)
3. ແນວທາງໃນການຈັດຕຽມແບບກໍ່ສ້າງລະອຽດ ແລະ ເອກະສານກ່ຽວຂ້ອງ (ອອກແບບເພື່ອເໜັ້ນໃຫໄດ້ລຳດັບງານ)
4. ຂໍ້ກຳນົດທາງດານເຕັກຂອງໂຄງການ ແລະ ເອກະສານອາງອີງຈາກ ຍທຂ (ກຳນົດຂອບເຂດຂອງວຽກງານ ແລະ ເງື່ອນໄຂຂອງຜູ້ກໍ່ສ້າງ)
5. ເອກສານການເຝິກອົບຮົມການຄຸ້ມຄອງການກໍ່ສ້າງ ແລະ ກຳບຳລຸງຮັກສາເສັ້ນທາງ
6. ເອກະສານກວດກາຄວາມເໝາະສົມຂອງແຕ່ລະໜ້າວຽກໃນຊ່ວງເວລາດຳເນີນການກໍ່ສ້າງ (Checklist)
7. ຮູບແບບການລາຍງານຄວາມຄືບໜ້າ (ຈັດຕຽມຮູບແບບບົດລາຍງານໃຫ້ເປັນຜແມັດອັນດຽວກັນ)
8. ຈັດຕຽມເອກະສານມອບໂອນໂຄງການຫຼັງການກໍ່ສ້າງສຳເລັດ (Project handover document)

### 1. ເອກະສານປະເມີນເງື່ອນໄຂຂອງໂຄງການ (ວັດແທກຄວາມເພິ່ງພໍໃຈຕາມ PIM)

ການປະເມີນ ແລະ ສຶກສາເງື່ອນໄຂຂອງໂຄງການເສັ້ນທາງ ທີ່ຕ້ອງການນຳສະເໜີຂໍທຶນເພື່ອຟື້ນຟູແກ້ໄຂ ໃຫ້ສາມາດນຳໃຊ້ໄດ້ຕາມວັດຖຸປະສົງຫຼັກຂອງໂຄງການ ພຊຄ-ຊກຂ ເຊິ່ງຖືກວ່າບັນທັດຖານເບື້ອງຕົ້ນ ດ້ວຍເຫດນັ້ນ ຈຶ່ງຈຳເປັນຈະຕ້ອງແນ່ໃສ່ພື້ນຖານໂຄງລ່າງຂອງເສັ້ນທາງທີ່ມີຢູ່ວ່າມີຄວາມອາດສາມາດພຽງໃດ ທາງດ້ານກາຍະພາບ ແລະ ສິ່ງແວດລ້ອມທາງສັງຄົມ.

ເພື່ອຕອບສະໜອງວຽກງານດັ່ງກ່າວນີ້ ທາງທີມງານທີ່ປຶກສາ ແລະ ຜູ້ປະສານງານໂຄງການເບື້ອງລັດຈຶ່ງໄດ້ທົບທວນນະໂຍບາຍຂອງໂຄງການ ເພື່ອສ້າງຂໍ້ກຳນົດໃນການຄັດເລືອກເສັ້ນທາງໃຫ້ສອດຄ່ອງທາງດ້ານເງື່ອນໄຂ ແລະ ງົບປະມານທີ່ຈັດສັນໄວ້, <u>ແຕ່ເຖິງຢ່າງໃດກໍ່ຕາມ ຂັ້ນຕອນໃນການປະເມີນຕໍ່ໄປນີ້ ອາດມີບາງບັນຫາທີ່ຈະຕ້ອງໄດ້ມີການຄົ້ນຄວ້າເພີ່ມ ເພື່ອຫາທາງອອກທີ່ແທ້ຈິງຂອງບັນຫາ ໂດຍສະເພາະແມ່ນວຽກງານວິສະວະກຳ.</u>

❖ **<u>ແບບຟອມ 001:</u> ການປະເມີນຄວາມສ່ຽງຂອງໂຄງການຟື້ນຟູເສັ້ນທາງ**

| ເງື່ອນໄຂການຄັດເລືອກເສັ້ນທາງໃນຮູບແບບວິສະວະກຳ ຕາມຂໍ້ກຳນົດຂອງຜູ້ໃຫ້ທຶນ<br>(Consider The existing road geometry to define the road selection for rehabilitation) | | | |
|---|---|---|---|
| ລຳດັບ<br>Item | ລາຍລະອຽດຂອງການກວດກາ<br>(Monitoring Items) | ເຫັນດີ<br>(Qualified) | ບໍ່ເຫັນດີ<br>(Unqualified) |
| 1 | ການຟື້ນຟູເສັ້ນທາງຂອງບ້ານຫາບ້ານທີ່ມີຢູ່ແລ້ວ<br>(Rehabilitation of existing village-to-village roads) | | |
| 2 | ເປັນເສັ້ນທາງທີ່ເຊື່ອມຕໍ່ລະຫວ່າງບ້ານຫາຕະຫຼາດ<br>(Number of households in the villages linked to market by the road) | | |
| 3 | ເປັນເສັ້ນທາງທີ່ເຊື່ອມຕໍ່ເນື້ອທີ່ດິນກະສິກຳ ແລະ ບັນດາບ້ານທີ່ຕິດພັນກັບຕະຫຼາດຕາມເສັ້ນທາງ<br>(Area of agricultural land in the villages linked to market by the road) | | |
| 4 | ເປັນເສັ້ນທາງທີ່ສາມາດປັບປຸງໃຫ້ສາມາດນຳໃຊ້ໄດ້ສອງລະດູ | | |

| | | | |
|---|---|---|---|
| | (It is a road that can be improved for two seasons.) | | |

| | | | |
|---|---|---|---|
| 5 | ແລວທາງແມ່ນຢູ່ໃນພື້ນທີ່ທາງເດີ່ມ ເລີ່ມແຕ່ Km…………ຫາ Km…………..<br>(Improve the road line on the middle of the original road<br>from Km……………to………………Km) | | |
| 6 | ບໍ່ມີວຽກຂຸດດິນຕໍ່ເນື່ອງເກີນ 30% ຂອງງົບປະມານ<br>No common excavate along the road alignment excess 30% in budget | | |
| 7 | ເປີເຊັນຄວາມເນີນຂອງທາງເດີ່ມ ບໍ່ເກີນ 20%<br>The existing gradient does not exceed 20% | | |
| 8 | ບໍ່ມີການກໍ່ສ້າງອາຄານຊົນລະສາດໃໝ່ໂດຍງົບປະມານເກີນ 30% ຕໍ່ແຫ່ງ<br>No construction a new hydraulic structure uses the cost over 30% in budget | | |
| 9 | ມີວັດສະດຸຖົ່ມຫນ້າທາງມີຢູ່ພື້ນທີໂຄງການ ຫຼື ໄລຍະທາງການຂົນສົ່ງບໍ່ເກີນ 1.5 ກິໂລ<br>(Borrow pit nearby construction area, delivery does not exceed 1.5 Km) | | |
| 10 | ມີບ່ອນຖິ້ມດິນຢູ່ພື້ນທີໂຄງການ ຫຼື ໄລຍະທາງການຂົນສົ່ງບໍ່ເກີນ 1 ກິໂລ<br>(Disposals are nearby construction area, delivery does not exceed 1 Km) | | |
| 11 | ໄດ້ຜ່ານການປະເມີນຜົນກະທົບດ້ານສິ່ງແວດລ້ອມສຳເລັດແລ້ວ<br>(Complete the Environmental Monitoring and Assessment Program, EMAP) | | |
| 12 | ໄດ້ຜ່ານການປະເມີນຜົນກະທົບດ້ານສິ່ງແວດລ້ອມ-ສັງຄົມສຳເລັດແລ້ວ<br>(Complete Social Safeguards Assessment) | | |

| | | | |
|---|---|---|---|
| ຈຳນວນໂຄງສ້າງທີ່ມີຢູ່<br>The number of Existing structures | ……………. ຈຸດ | ຈຳນວນໂຄງສ້າງທີ່ຈະກໍ່ສ້າງໃໝ່<br>The number of new structures propose to construct | ……………. ຈຸດ |
| ປະເພດວັດສະດຸຖົ່ມຫນ້າທາງເດີ່ມ:<br>Type of material for surface course | | ຄວາມກ້ວາງສະເລ່ຍຂອງໜ້າທາງ<br>(Average of Carriageway) | |
| ຄວາມພ້ອມໃນການລົງມືກໍ່ສ້າງ:<br>construction readiness: | ……………………………………………………………………………………<br>…………………………………………………………………………………… | | |

| |
|---|
| **ລາຍຊື່ໜ່ວຍງານປະເມີນຜົນຄວາມເປັນໄປໄດ້ຂອງໂຄງການ** |
| ຄຳເຫັນໜ່ວຍງານ ຍທຂ ເມືອງ:<br>Comments of DWPT Unit: ລາຍເຊັນ: (Signature) |
| ຄຳເຫັນຂອງຜູ້ປະສານງານໂຄງການຂັ້ນເມືອງ:<br>Comments of DPIT Unit: ລາຍເຊັນ: (Signature) |

## 2. ເອກະປະເມີນຫນ້າວຽກລະອຽດ, ຈັດລຽງລຳດັບງານ (ເພື່ອເປັນຕົວຊີ້ວັດທາງດ້ານງົບປະມານ ແລະ ຜົນໄດ້ຮັບ)

ເພື່ອຈັດສັນລຳດັບງານໃຫ້ເໝາະສົມ ຈຳເປັນຕ້ອງມີທີມງານຜູ້ມີປະສົບການໃນດ້ານການທົບທວນທາງກາຍຍະພາບຂອງເສັ້ນທາງ ຜົນທີໄດ້ຮັບແມ່ນຈະນຳໄປສູ່ການຕັດສິນໃຈໃນການນຳໃຊ້ງົບປະມານ ເພື່ອແກ້ໄຂຄວາມຈຳເປັນຂອງເສັ້ນທາງເຫຼົ່ານັ້ນ ແລະ ເລັ່ງເປົ້າໝາຍໃນການແກ້ໄຂໃຫ້ເສັ້ນທາງສາມາດໃຊ້ງານໄດ້ 2 ລະດູ. ສະນັ້ນ, ການປະເມີນໜ້າວຽກລະອຽດ ໃນໂຄງການຟື້ນຟູເສັ້ນທາງນຳໃຊ້ແບບຟອມ 2 ເງື່ອນໄຂສະພາບເສັ້ນທາງເຊັ່ນ:

1. ກວດກາສະພາບໜ້າທາງ ກວດເບິ່ງວ່າມີຈຸດໃດເຊື່ອມໂຊມເປ່ເພເຊັ່ນ: ຖືກນໍ້າກັດເຊາະ, ເປັນຮ່ອງ, ເປັນຂຸ່ມ ແລະ ມີສະໄລມາຖົມໜ້າທາງ ແລະ ອື່ນໆ ໃຫ້ເກັບລາຍລະອຽດເຊັ່ນ: ຕໍາແໜ່ງຂອງຈຸດເປ່ເພ, ວັດແທກເອົາຄ່າຕ່າງໆ (ກວ້າງ, ຍາວ ແລະ ສູງ/ເລິກ ໂດຍມີຄ່າທຽບຖານກັບຈຸດໜ້າທາງເດີມ)
2. ກວດກາສະພາບສະລົບຂອງທາງ (ສະລົບດິນຕັດ, ສະລົບດິນຖົມ ແລະ ສະລົບປ້ອງກັນການເຊາະເຈື່ອນ)
3. ກວດກາລະບົບລະບາຍນໍ້າຂ້າງທາງ
4. ກວດກາໂຄງສ້າງທໍ່ຫລອດທາງ
5. ກວດກາໂຄງສ້າງຂົວ
6. ກວດກາປ້າຍຈໍລະຈອນ ແລະ ຫຼັກກິໂລແມັດ

❖ <u>ແບບຟອມ 001:</u> ການປະເມີນໜ້າວຽກລະອຽດໃນໂຄງການຟື້ນຟູເສັ້ນທາງ

| ລາຍລະອຽດຂໍ້ບົກຜ່ອງທີ່ພົບເຫັນ ແລະ ວຽກທີ່ຕ້ອງການທີ່ຈະຊັບຊິດວັນ<br>DEFECT DESCRIPTION AND SUBSEQUENT WORK REQUIREMENTS | | | | | |
|---|---|---|---|---|---|
| ໜ້າວຽກ<br>**TASK** | ລາຍລະອຽດໜ້າວຽກ<br>**TASK DESCRIPTION** | ບົກຜ່ອງ<br>**DR** | ບໍ່ບົກຜ່ອງ<br>**No DR** | ຮູບຖ່າຍໃນຊ່ວງລົງ ກວດກາ | ຄໍາເຫັນ<br>**COMMENTS** |
| 1 | ກວດກາເບິ່ງສະພາບທົ່ວໄປຂອງເສັ້ນທາງໃຊ້ເປັນຂໍ້ມູນເບື້ອງຕົ້ນໃນການອ້າງອີງເງື່ອນໄຂ ຕາມແບບຟອມ 001 | ☐ | ☐ | | |
| 2 | ກວດກາສະພາບໜ້າທາງ | ☐ | ☐ | | |
| 3 | ກວດກາສະພາບສະລົບຂອງທາງ (ສະລົບດິນຕັດ ສະລົບດິນຖົມ ແລະ ,ສະລົບປ້ອງກັນການເຊາະເຈື່ອນ( | ☐ | ☐ | | |
| 4 | ກວດກາລະບົບລະບາຍນໍ້າຂ້າງທາງ | ☐ | ☐ | | |
| 5 | ກວດກາໂຄງສ້າງທໍ່ຫລອດທາງ | ☐ | ☐ | | |
| 6 | ກວດກາໂຄງສ້າງຂົວ | ☐ | ☐ | | |
| 7 | ກວດກາປ້າຍຈະລາຈອນ ແລະ ຫຼັກກິໂລແມັດ | ☐ | ☐ | | |
| 8 | | ☐ | ☐ | | |

ໝາຍເຫດ: ກໍານົດລໍາດັບຄວາມສໍາຄັນຂອງໜ້າວຽກອອກມາ (P1, P2 & P3) ເພາະສິ່ງນີ້ຈະເປັນໂຕຊ່ວຍໃນການຕັດສິນໃຈໃນການນໍາໃຊ້ທຶນ

## 3. ແນວທາງໃນການຈັດຕຽມແບບກໍ່ສ້າງລະອຽດ ແລະ ເອກະສານກ່ຽວຂ້ອງ (ອອກແບບເພື່ອເໜັ້ນໃຈໃຫ້ໄດ້ລຳດັບງານ)

ພາຍຫຼັງສຳເລັດເກັບຂໍ້ມູນທີຈຳເປັນໃນການອອກແບບ ຕາມພື້ນທີ່ຈະມີການປັບປຸງໃຫ້ຄົບຖ້ວນ ແລ້ວຈຶ່ງນຳຂໍ້ມູນມາອອກແບບໃຫ້ມີລາຍການແບບດັ່ງນີ້:

ກ.) ແຜນແຕ້ມຕໍ່າແໜ່ງໂຄງການ (Project location)

ຂ.) ແຜນແຕ້ມໂຄງການຟື້ນຟູເສັ້ນທາງຂອງແຂວງມາລວມເຂົ້າ (ບອກຊື່ໂຄງການ ແລະ ສະຖານທີ່ສຳຄັນ) ຊື່ແຜ່ນແຕ້ມ......................................................

ຄ.) ແຜນແຕ້ມລວມສະເພາະໂຄງການ (ບອກສ່ວນສຳຄັນຕ່າງໆທີພົວພັນພາຍໃນພື້ນທີ ເຊັ່ນ: ເສົາໄຟຟ້າ, ຮ່ອງນໍ້າ, ສາຍນໍ້າ, ເຮືອນ, ຮົ້ວ, ,ຕົ້ນໄມ້, ພື້ນທີ່ກະສິກຳຕ່າງໆ, ໃສ່ລູກສອນບອກທິດ ແລະ ອົງປະກອບຂອງທາງທີມີຢູ່)

ງ.) ຕົວຢ່າງໜ້າຕັດໃນຮູບແບບຕ່າງໆ (ໃຫ້ລະບຸວັດສະດຸໃນການຖົມທາງຊັ້ນຮອງພື້ນທາງ ແລະ ຊັ້ນພື້ນທາງເປັນວັດສະດຸທີຫາໄດ້ໃນໂຄງການ ເຊັ່ນ: ຊັ້ນຮອງພື້ນທາງໃຫ້ຫາບໍ່ດິນທີ່ຢູ່ໃກ້ ຫຼື ສາມາດນຳໃຊ້ດິນທີ່ຂຸດໜ້າທາງມາຖົມໂດຍການເຫັນດີຂອງວິສະວະກອນ ແລະ ດິນຫມາກຄອນເປັນວັດສະດຸກໍ່ສ້າງໜ້າທາງ )

ຈ.) ແຜນແຕ້ມຮູບແຜນພຽງ ແລະ ໜ້າຕັດຍາວໃຊ້ມາດຕາສ່ວນ 1:1000 ປະກອບມີລາຍລະອຽດເຊັ່ນ: ສະແດງເສັ້ນຈຳກັດຄວາມຍາວໃນໄລຍະ 250 ແມັດ (Limit line), ໃສ່ລູກສອນເຄື່ອງໝາຍທິດ, ລະບຸຈຸດທີ່ຕ້ອງປັບປຸງ ແລະ ໝາຍບອກແຜນແຕ້ມລາຍລະອຽດໃນການກໍ່ສ້າງ, ໃສ່ລາຍການໂຄງສ້າງຕາມແລວທາງໝາຍບອກວ່າເປັນອັນເກົ່າແລະອັນໃໝ່, ໝາຍບອກອາຄານ ແລະ ສິ່ງທີກ່ຽວຂ້ອງຕ່າງໆ (ເຮືອນ, ຮົ້ວ, ສວນ, ເສັ້ນທາງຊອຍ, ເສົ້າໄຟຟ້າ, ເສັ້ນນໍ້າທຳມະຊາດ ແລະ ທໍ່ນໍ້າປະປາ)

ສ.) ແຜນແຕ້ມໜ້າຕັດຂວາງທີກ່ຽວຂ້ອງກັບການກໍ່ສ້າງ ກໍ່ລະນີບໍ່ມີການກໍ່ສ້າງບໍ່ຄວນນຳອອກມາ

ຊ.) ແຜນແຕ້ມລາຍອຽດກ່ຽວກັບການປ້ອງວຽກຄອນກຣີດ ເຊັ່ນ: ອົງປະກອບທໍ່ລອດທາງ, ຂົວ, ແຜນຄອນກຣີດ ຫຼື ຫີນລຶບແລບປ້ອງກັນສະລິບ ແລະ ຝາກັນດິນ

ຍ.) ແຜນແຕ້ມແບບມາດຕະຖານຕ່າງໆ ທີກ່ຽວຂ້ອງໃຫ້ຄົບຖ້ວນ

2. ການນຳ BoQ ອອກມາເພີ່ມເຮັດບົດລາຍງານ
3. ການເຮັດບົດລາຍງານ ແລະ ຈັກສິ່ງໃຫ້ວິສະວະກອນໂຍທາກວດສອບ ກ່ອນຂໍອະນຸມັດແບບ
4. ໃນໄລຍະການກໍ່ສ້າງ ຫາກມີການປ່ຽນແບບແມ່ນໃຫ້ປຶກສາວິສາວະກອນທຸກຄັ້ງເພື່ອສຶກສາແລະເຫັນດີຮ່ວມກັນ ແລະ ແນະນຳວິທີປັບປຸງແບບ
5. ພາຍຫລັງສຳເລັດວຽກກໍ່ສ້າງໃຫ້ດຳເນີນການອັບເດດແບບ ທັງໝົດແລ້ວປ່ຽນມາເປັນແບບສຳເລັດການກໍ່ສ້າງເພື່ອສົ່ງຕໍ່ໃຫ້ຜູ້ກະກຽມເອກະສານການມອບຮັບໂຄງການ

## 4. ຂໍ້ກຳນົດທາງດ້ານເຕັກນິກຂອງໂຄງການ ແລະ ເອກະສານອ້າງອີງຈາກ ຍທຂ (ກຳນົດຂອບເຂດຂອງວຽກງານ ແລະ ເງື່ອນໄຂຂອງຜູ້ກໍ່ສ້າງ)

ທາງດ້ານວິທີການອອກແບບທາງ ແລະ ໂຄງສ້າງປະກອບແມ່ນແນ່ໃສ່ ເອກະສານອ້າງອີງຂອງ ຍທຂ ເຊິ່ງລາຍລະອຽດຈະຕ້ອງໄດ້ຄົ້ນຄວ້າ ເອກະສານການບຳລຸງຮັກສາເສັ້ນທາງ (MAC) ເພື່ອຄັດເລື່ອກເອົາເນື້ອໃນທີສອດຄ່ອງກັບຮູບແບບກິດຈະກຳການປັບປຸງເສັ້ນທາງ ລວບລວມເຂົ້າກັນໃຫ້ພຽງພໍກັບໜ້າວຽກ.

## 5. ເອກສານການເຝິກອົບຮົມການຄຸ້ມຄອງການກໍ່ສ້າງ ແລະ ການເຝິກຫັດກັບກິດຈະກຳກໍ່ສ້າງຕົວຈິ່ງ

ການກະກຽມເອກະສານການເຝິກອົບຮົມຂັ້ນຕອນຕ່າງໆ ໃນການກໍ່ສ້າງທາງໂດຍເໜັ້ນໃສ່ວຽກຟື້ນຟູເສັ້ນທາງໃຫ້ສາມາດຮອງຮັບ ວຽກງານການພັດທະນາຊີວິດການເປັນຢູ່ຂອງປະຊາຊົນໃນຄົງເຂດດັ່ງກ່າວ, ເພື່ອໃຫ້ການກໍ່ສ້າງໄດ້ມີປະສິດທິພາບທີດີ ການເຝິກອົບຮົມຜູ້ປະຕິບັດງານໃນວຽກຕົວຈິ່ງ ໃຫ້ຮູ້ຈັກຂັ້ນການດຳເນີນງານ ແລະ ພາລະບົດບາດຂອງຕົນກັບແຕ່ລະໜ້ສາວຽກຈຳເປັນຈັດສັນບຸກຂະລະກອນເປົ້າໝາຍ ແລະ ລິເລີ່ມການການເຝິກອົບຮົມກ່ອນການກໍ່ສ້າງ ເຊັ່ນ: ການກໍ່ສ້າງຮ່ອງລະບາຍນໍ້າ

ຂ້າງທາງ, ການຖົມດິນຊັ້ນໜ້າທາງ, ການປັບປຸງທໍ່ລອດທາງ, ອາຄານຂົວຂ້າມແມ່ນໍ້າ ແລະ ການສ້ອມແປງປ້າຍບອກທາງຕ່າງໆ.

## 6. ເອກສານກວດກາຄວາມເໝາະສົມຂອງແຕ່ລະໜ້າວຽກໃນຊ່ວງເວລາດຳເນີນການກໍ່ສ້າງ (Checklist)

ເພື່ອໃຫ້ຜູ້ນຳໃຊ້ເຂົ້າໃຈ ແລະ ມີຄວາມຄຸ້ນເຄີຍ ກັບເອກກະສານກວດກາຄຸນນະພາບວຽກທັງໝົດ ຈາກ ແບບຟອມ 3 - 9 ແມ່ນຈະໄດ້ເຝິກອົບຮົມວິທີນຳໃຊ້ ໃນທາງທິດສະດີ ແລະ ການປະຕິບັດກັບວຽກຕົວຈິ່ງ ໃຫ້ຜູ້ທີໄດ້ຮັບການຄັດເລືອກມາຮັບໜ້າທີວຽກດັ່ງກ່າວນີ້.

(ແບບຟອມຕ່າງໆ ໃຫ້ເບິ່ງເອກະສານຕິດຄັດມາ)

## 7. ຮູບແບບການລາຍງານຄວາມຄືບໜ້າ (ຈັດຕຽມຮູບແບບບົດລາຍງານໃຫ້ເປັນຝໍແມັດອັນດຽວກັນ)

ວຽກການລາຍງານຄວາມສຳເລັດຂອງໜ້າວຽກ ແມ່ນໃຫ້ຜູ້ກໍ່ສ້າງດຳການລະງານ ເຊິ່ງຜູ້ກໍ່ສ້າງຈະຕ້ອງໄດ້ຂຶ້ນການກໍ່ສ້າງທັງໝົດແລ້ວສົ່ງແຜ່ນໃຫ້ວິສະກອນ ແລະ ຜູ້ປະສານງານກວດສອບ ຫລັງຈາກນັ້ນ ໃຫ້ປະໜ້າທີ່ລົງຕາມວັນທີສຳເລັດວຽກຂອງແຕ່ລະໜ້າວຽກ ໂດຍຜູ້ຕິດຕາມການກໍ່ສ້າງຈະປະເມີນຄວາມຄືບໜ້າໃນທຸກອາທິດ ແລະ ແຕ່ລະວັນຜູ້ກໍ່ສ້າງຈະຕ້ອງລາຍງານວຽກໃຫ້ຜູ້ຕິດຕາມການກໍ່ສ້າງຢ່າງຖືກຕ້ອງ.

## 8. ຈັດຕຽມເອກະສານມອບໂອນໂຄງການຫຼັງການກໍ່ສ້າງສຳເລັດ (Project handover document)

ເອກະສານມອບຄືນໂຄງການຈະຕ້ອງຈັດຕຽມໃຫ້ເຈົ້າຂອງໂຄງການໃຫ້ຄົບຕາມແຜັກກັດການກໍ່ສ້າງທັງຫມົດ ໂດຍຈະແບບອອກເປັນເອກະສານດັ່ງຕໍ່ໄປນີ້:

- ເອກະສານແບບກໍ່ສ້າງສ້າງແລ້ວແມ່ນໃຫ້ຜູ້ຂຽນແບບ ອັບເດດຂໍ້ມູນໃຫ້ຖືກກັບໜ້າງານກໍ່ສ້າງຕົວຈິ່ງ ແລ້ວສົ່ງໃຫ້ວິສະວະກອນພາກສະໜາມ/ທີປຶກສາກໍ່ສ້າງທາງກວດສອບ ຫລັງຈາກນັ້ນໃຫ້ສົ່ງຂອບຟາຍທັງໝົດໃຫ້ໂຄງການຂັ້ນເມືອງ ແລະ ແຂວງ
- ເອກສານໜ້າງານເຊັ່ນ: ເອກະສານກວດກາແຕ່ລະໜ້າວຽກ, ເອກະສານບົດລາຍງານ, ເອກກະສານແນະນຳວຽກ, ຮູບພາບການກໍ່ສ້າງໃນທຸກຂັ້ນຂອງແຕ່ລະສ່ວນງານ ແລະ ການປະກອບເອກະສານມອບຮັບໃຫ້ວິສະວະກອນພາກສະໜາມເປັນຜູ້ດຳເນີນການ